ສະບາຍດີ /Sabaïdeeee

ຂ້າພະເຈົ້າຊື່ Nathalie Justin ,ຂ້າພະເຈົ້າມີຄວາມຍິນດີ ແລະ ເປັນກຽດທີ່ໄດ້ມາເປັນຜູ້ອຳນວຍການໃຫຍ່ຄົນໃໝ່ຂອງໂຮງຮຽນຝຣັ່ງນານາຊາດວຽງຈັນ Josué Hoffet, ຊຶ່ງເປັນສະຖາບັນການສຶກສາທີ່ໄດ້ຮັບການຮັບຮອງຈາກກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາແຫ່ງຊາດຝຣັ່ງ ແລະ ພາຍໃຕ້ສົນທິສັນຍາກັບອົງການການສຶກສາຝຣັ່ງທີ່ຕ່າງປະເທດ.

ຂ້າພະເຈົ້າມາຈາກປະເທດຝຣັ່ງ, ພາຍຫຼັງຈົບການສຶກສາລະດັບມະຫາວິທະຍາໄລ, ຂ້າພະເຈົ້າໄດ້ເປັນອາຈານສອນວິຊາພູມສາດ/ປະຫວັດສາດ ປະມານ15ປີ. ເມື່ອ10ປີກ່ອນ ຂ້າພະເຈົ້າໄດ້ເລືອກມາເປັນພະນັກງານຝ່າຍບໍລິຫານ.

ຂ້າພະເຈົ້າໄດ້ເປັນຜູ້ນຳພາໂຮງຮຽນຊັ້ນມັດທະຍົມຕອນຕົ້ນສອງແຫ່ງໃນເຂດເມືອງປາຣີ ແລະ ໄດ້ພັດທະນາຫຼາຍໂຄງການທີ່ມີເປົ້າໝາຍຄິດຄົ້ນກ່ຽວກັບເສັ້ນທາງການສຶກສາຂອງນັກຮຽນນັບຕັ້ງແຕ່ຊັ້ນອະນຸບານ ຈົນເຖິງ ຊັ້ນມັດທະຍົມຕອນປາຍ ໂດຍການເຮັດໃຫ້ພວກເຂົາແຕ່ລະຄົນສາມາດມີສ່ວນຮ່ວມຢ່າງເຕັມທີ່ໃນການສຶກສາຂອງຕົນເອງ ໂດຍອີງຕາມຄວາມຕອ້ງຂອງພວກເຂົາ.

ສະນັ້ນ ທ່ານສາມາດເຊື່ອໝັ້ນໃນໂຕຂ້າພະເຈົ້າໄດ້ທີ່ຈະນຳເອົາຄວາມຮູ້ຄວາມສາມາດ ແລະ ປະສົບການຂອງຂ້າພະເຈົ້າມານຳໃຊ້ໃນການບໍລິຫານ LFIV, ມານຳໃຊ້ໃນການເຮັດວຽກຮ່ວມກັບຄະນະກຳມະການຄຸ້ມຄອງໂຮງຮຽນ ແລະ ສະມາຄົມຜູ້ປົກຄອງນັກຮຽນ.

ການເປີດສົກຮຽນໃໝ່ຂອງພວກເຮົາໄດ້ດຳເນີນພາຍໃຕ້ສະພາວະທີ່ບໍ່ເຄີຍມີມາກ່ອນເນື່ອງຈາກສະພາບການດ້ານສຸຂະພາບໃນປະຈຸບັນທີ່ບໍ່ອຳນວຍໃຫ້ພວກເຮົາຕອ້ນຮັບນັກຮຽນເຂົ້າຮຽນໃນໂຮງຮຽນ .ທີມງານທັງໝົດຂອງ LFIV ໄດ້ຖືກລະດົມເພື່ອເຮັດໃຫ້ນັກຮຽນສາມາດຮຽນທາງໄກໃນເງື່ອນໄຂທີ່ເໝາະສົມເທົ່າທີ່ຈະເປັນໄປໄດ້ ອີງຕາມລະດັບຊັ້ນຮຽນທີ່ແຕກຕ່າງກັນ.

ຂ້າພະເຈົ້າ ແລະ ທີມງານທັງໝົດຂອງ LFIV ຍິນດີຮັບຟັງທ່ານ ແລະ ຫວັງວ່າທ່ານຈະເລີ່ມຕົ້ນສົກຮຽນ 2021 ໄດ້ຢ່າງດີ. ຂ້າພະເຈົ້າມີຄວາມຍິນດີທີ່ຈະລໍຖ້າພົບປະທ່ານ.

Hello / Sabaïdeeee

My name is Nathalie Justin and I am pleased and honoured to be the new principal of the French International High School of Vientiane, Josué Hoffet, an establishment approved by the Ministry of National Education, Youth and Sport and under agreement with the AEFE.

I come from France where, after a university education, I taught history-geography for about 15 years. Then 10 years ago I chose to become a manager.

I managed two middle schools in the Paris region and developed several projects that aimed to develop the career path of students from kindergarten to the end of high school, allowing each student, whatever they needs, to be fully involved in their education.

You can therefore count on me to put my skills and experience at the service of the LFIV, in dialogue with the management committee and the parents' association.

We are going back to school under unprecedented conditions, since the health situation does not yet allow us to welcome students. The entire LFIV team is mobilized to offer students distance learning methods that are as adapted as possible to the different levels of education.

Naturally, I remain at your disposal, as does the entire team, and I wish you a good start to the 2021 school year. We look forward to meeting you.